ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ການທ້ອນເງິນຄືການຮັກສາສະຖຽນລະພາບຄົວເຮືອນ



ກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ສະມາຄົມການເງິນຈຸລະພາກ (ສມກຈ) ໄດ້ຈັດຕັ້ງການສະເຫຼີມສະຫຼອງ ວັນທ້ອນເງິນອາຊຽນ (ວັນທີ 31 ຕຸລາ) ຜ່ານລະບົບອອນລາຍ (Zoom) ໃນວັນທີ 29 ທັນວາ 2021 ທີ່ຫ້ອງການ ສມກຈ, ນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມຂອງທ່ານ ພູຊົງ ຈັນທະຈັກ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ; ທ່ານ ສົມພອນ ສີແສງລັດ, ປະທານສະພາບໍລິຫານ ສມກຈ ພ້ອມຄະນະ; ທ່ານ ນາງ ປະມອນ ເພັດທານີ ຜູ້ອຳນວຍການ ສມກຈ; ບັນດາສະມາຊິກ ສມກຈ; ຜູ້ໃຫ້ທຶນ; ຜູ້ປະກອບການ ແລະພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມເກືອບ 100 ຄົນ.

ວັນທ້ອນເງິນອາຊຽນ ກົງກັບມື້ດຽວກັນກັບວັນທ້ອນເງິນໂລກ (ວັນທີ 31/10) ຊຶ່ງເປັນມື້ທີ່ທົ່ວລະບົບທະນາຄານ ແລະ ສະຖາບັນການເງິນໃນພາກພື້ນອາຊຽນ ແລະ ໃນໂລກ ພ້ອມກັນສະເຫຼີມສະຫຼອງ ເພື່ອເປັນການປູກຈິດສຳນຶກກ່ຽວກັບຄວາມສຳຄັນ ແລະ ຜົນປະໂຫຍດຂອງການທ້ອນເງິນໃຫ້ແກ່ສັງຄົມ; ສປປ ລາວ ໄດ້ຈັດງານວັນດັ່ງກ່າວ ເປັນຄັ້ງທີ 2 ເພາະການທ້ອນເງິນ, ການອອມເງິນ ຫຼື ການປະຢັດເງິນແມ່ນສ່ວນໜຶ່ງຂອງລາຍໄດ້ ທີ່ບໍ່ໄດ້ໃຊ້ຈ່າຍໃນທັນທີ ແລະ ຄາດຫວັງວ່າຈະໃຊ້ຈ່າຍໃນພາຍໜ້າ; ການທ້ອນເງິນໝາຍເຖິງການຕັດສິນໃຈເສຍສະຫຼະ ບໍ່ໃຊ້ຈ່າຍເງິນໃນປະຈຸບັນ ແຕ່ທ້ອນເງິນໄວ້ ເພື່ອຈະໄດ້ຮັບຜົນຕອບແທນ ທີ່ດີກວ່າໃນອະນາຄົດ; ສະນັ້ນ, ເມື່ອກ່າວເຖິງການທອ້ນເງິນ ແມ່ນບໍ່ສາມາດຕັດແຍກອອກຈາກບົດບາດຂອງທະນາຄານ, ສະຖາບັນການເງິນ, ສະຫະກອນສິນເຊື່ອ ແລະຝາກປະຢັດ, ກອງທຶນບ້ານ.

ຜົນປະໂຫຍດຂອງການທ້ອນເງິນ ສໍາລັບຕໍ່ກັບບຸກຄົນ ແລະ ຄົວເຮືອນ ແມ່ນການທ້ອນເງິນຖືເປັນກິດຈະກໍາ ເພື່ອຮັກສາສະຖຽນລະພາບທາງການເງິນຂອງບຸກຄົນ ແລະ ຄົວເຮືອນໃນໄລຍະຍາວເນື່ອງຈາກວ່າການທ້ອນເງິນ ສາມາດຊ່ວຍເຫຼືອເຂົາເຈົ້າໃນ ອະນາຄົດທີ່ເກີດເຫດການສຸກເສີນ, ມີເຫດການສໍາຄັນໃນຊີວິດ ເຊັ່ນການແຕ່ງງານ, ອຸບັດຕິເຫດ ຫຼື ການລົງທຶນໃສ່ການສຶກສາ ຊຶ່ງ ຕ້ອງການເງິນເປັນກ້ອນ; ສໍາລັບຕໍ່ກັບຂະແໜງການທະນາຄານກໍ່ຄືຕໍ່ກັບພື້ນຖານເສດຖະກິດນັ້ນ, ການທ້ອນເງິນຍັງສ້າງປະໂຫຍດອັນໃຫຍ່ຫຼວງເປັນປັດໄຈຫຼັກ ທີ່ມີຜົນເຖິງລະດັບການລົງທຶນໃນເສດຖະກິດ, ເປັນສິ່ງຈໍາເປັນອັນພື້ນຖານໃນການກະຕຸ້ນການຂະຫຍາຍຕົວຂອງເສດຖະກິດໃນໄລຍະຍາວ; ການທ້ອນເງິນເປັນແຫຼ່ງທຶນໃນການສະໜອງເງິນທຶນ ເພື່ອແກ້ໄຂຄວາມຍາກຈົນ, ເພີ່ມຄວາມສົມບູນພູນສຸກຂອງປະຊາຊົນ ກາຍເປັນແຫຼ່ງທຶນທີ່ມີຄວາມໝັ້ນຄົງ ຕໍ່ລະບົບການເງິນ-ການທະນາຄານພາຍໃນປະເທດ.

ສະພາບລວມຂອງການທ້ອນເງິນຢູ່ ສປປ ລາວ ກວມເອົາປະມານ 60% ຂອງ GDP (2018); ໃນຕໍ່ໜ້າວຽກງານການທ້ອນເງິນກໍ່ຈະຂະຫຍາຍເພີ່ມຂຶ້ນ, ມີປະສິດທິຜົນຫຼາຍກວ່າເກົ່າ; ອີງຕາມການສໍາຫຼວດການເຂົ້າເຖິງການບໍລິການທາງດ້ານການເງິນໃນ ສປປ ລາວ ຫຼື ການສໍາຫຼວດ FinScope 2014, ການທ້ອນເງິນຖືເປັນຜະລິດຕະພັນທາງດ້ານການເງິນ ທີ່ປະຊາຊົນລາວນໍາໃຊ້ ຫຼາຍກວ່າໝູ່ໃນບັນດາຜະລິດຕະພັນທາງການເງິນອື່ນ ເຊັ່ນ: ການຊໍາລະ, ການໂອນເງິນ, ສິນເຊື່ອ ແລະ ປະກັນໄພ; ແຕ່ການທ້ອນເງິນໃນປະເທດເຮົາຍັງບໍ່ມີລັກສະນະສົ່ງເສີມການຂະຫຍາຍຕົວຂອງເສດຖະກິດ ເນື່ອງຈາກການທ້ອນເງິນສ່ວນໃຫຍ່ບໍ່ຜ່ານທະນາຄານ ຫຼື ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຊຶ່ງໃນຈໍານວນປະຊາກອນຜູ້ໃຫຍ່ທັງໝົດ (ຜູ້ມີອາຍຸ 18 ປີຂຶ້ນໄປ) ມີປະຊາກອນ 77% ທີ່ທ້ອນເງິນ ແລະ 23% ບໍ່ມີການທ້ອນເງິນເນື່ອງຈາກບໍ່ມີເງື່ອນໄຂພຽງພໍ; ສິ່ງດັ່ງກ່າວສະທ້ອນໃຫ້ເຫັນສິ່ງທ້າທາຍ ໂດຍສະ ເພາະແມ່ນການສະໜອງທາງເລືອກໃນການທ້ອນເງິນທີ່ເໝາະສົມໃຫ້ແກ່ປະຊາຊົນ ເພື່ອໃຫ້ປະຊາຊົນຫັນມາທ້ອນເງິນກັບສະຖາບັນການເງິນຫຼາຍກວ່າການທ້ອນເງິນ ທີ່ເປັນຊັບສິນຕົວຈິງ, ສັດລ້ຽງ, ວັດຖຸມີຄ່າ ແລະ ສິ່ງດັ່ງກ່າວຈະເຮັດໃຫ້ເງິນຖືກເອົາໄປນໍາໃຊ້ເຂົ້າໃນການລົງທຶນຫຼາຍຂຶ້ນ.



ປະຈຸບັນໄດ້ມີຫຼາຍພາກສ່ວນ ທີ່ໄດ້ມີການລິເລີ່ມເອົາໃຈໃສ່ສົ່ງເສີມການທ້ອນເງິນໃຫ້ມີຄວາມຫຼາກຫຼາຍໃນຫຼາຍຮູບແບບ ເຊັ່ນ: ບາງສະຖາບັນການເງິນຈຸລະພາກ ໄດ້ມີການສ້າງຜະລິດຕະພັນການທ້ອນເງິນໃນໂຮງຮຽນ ເພື່ອປູກຝັງຈິດສຳນຶກໃຫ້ແກ່ນ້ອງນັກຮຽນຕັ້ງແຕ່ອາຍຸຍັງນ້ອຍ; ບາງສະຖາບັນການເງິນຈຸລະພາກກໍ່ໄດ້ສົ່ງເສີມການທ້ອນເງິນເປັນກຸ່ມສຳລັບເພດຍິງ ເພື່ອເປັນການສົ່ງເສີມບົດບາດນຳໜ້າທາງດ້ານເສດຖະກິດຊຶ່ ງເປັນການສ້າງຜົນປະໂຫຍດຢ່າງຫຼວງຫຼາຍໃຫ້ແກ່ຄອບຄົວກໍ່ຄືພື້ນຖານເສດຖະກິດ-ສັງຄົມໂດຍລວມ. ນອກຈາກນັ້ນ, ຍັງມີໂຄງການ MRA-AFP ທີ່ໄດ້ສົ່ງເສີມການທ້ອນເງິນໃນເຂດຊົນນະບົດ ໃຫ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ ໂດຍເນັ້ນໃສ່ການໃຫ້ຄວາມຮູ້ພື້ນຖານທາງດ້ານການເງິນ.

ທ່ານ ພູຂົງ ຈັນທະຈັກ ຍັງຮຽກຮ້ອງມາຍັງຜູ້ປະກອບການ ແລະ ພົນລະເມືອງລາວ ສືບຕໍ່ເພີ່ມທະວີນ້ຳໃຈປະຢັດ ຕາມນະໂຍບາຍຂອງລັດຖະບານ ໂດຍສະເພາະເອົາໃຈໃສ່ການສົ່ງເສີມການທ້ອນເງິນ ໃນນີ້ຕ້ອງອອກແຮງສ້າງຜະລິດຕະພັນໃໝ່ທາງດ້ານການເງິນ ມີປະເພດເງິນຝາກໃຫ້ຫຼາກຫຼາຍ, ເໝາະສົມຕິດແທດກັບຄວາມຕ້ອງການຂອງປະຊາຊົນໃຫ້ຫຼາຍຂຶ້ນ; ຂະຫຍາຍຂອບເຂດການບໍລິການໃຫ້ໄປເຖິງປະຊາຊົນຫຼາຍຂຶ້ນ ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ການຂະຫຍາຍການໃຫ້ບໍລິການອາດຈະເປັນໃນຮູບແບບຕົວແທນ ໝາຍເຖິງໃຫ້ຫ້າງຮ້ານ ຫຼື ບຸກຄົນທີ່ມີຄວາມເໝາະສົມ ສາມາດເປັນຕົວແທນໃຫ້ບໍລິການເງິນຝາກໄດ້ ບໍ່ຈຳເປັນຕ້ອງເປັນການຂະຫຍາຍສາຂາ ຫຼື ໜ່ວຍບໍລິການ ເນື່ອງຈາກການຂະຫຍາຍຮູບແບບດັ່ງກ່າວຈະມີຕົ້ນທຶນສູງ; ຫັນການໃຫ້ບໍລິການການສຳລະໃຫ້ເປັນຮູບແບບດິຈິຕອນຫຼາຍຂຶ້ນ, ການນຳໃຊ້ລະບົບເຕັກໂນໂລຊີເຂົ້າໃນການໃຫ້ບໍລິການເຮັດໃຫ້ຕົ້ນທຶນຫຼຸດລົງ ສາມາດເຂົ້າເຖິງປະຊາຊົນໃນຂອບເຂດທີ່ກວ້າງຂວາງຫຼາຍຂຶ້ນ ດ້ວຍລາຄາທີ່ສົມເຫດສົມຜົນ ແລະ ອອກແຮງສົ່ງເສີມວຽກຄວາມຮູ້ພື້ນຖານທາງດ້ານການເງິນ ແລະ ເຜີຍແຜ່ວຽກງານປົກປ້ອງຜູ້ຊົມໃຊ້ທາງດ້ານການເງິນ, ແກ້ໄຂບັນຫາຂໍ້ມູນບໍ່ຈະແຈ້ງລະຫວ່າງສະຖາບັນການເງິນ ແລະ ລູກຄ້າຂອງຕົນ ເພື່ອໃຫ້ບັນລຸການເງິນ ທີ່ມີຄວາມຮັບຜິດຊອບຈະເປັນພື້ນຖານໃນການປັບປຸງການເຂົ້າເຖິງການບໍລິການທາງດ້ານການເງິນຂອງປະຊາຊົນທົ່ວໄປໃຫ້ດີຂຶ້ນ.

**# ຂ່າວ: ຣັດສະໝີ ດວງສັດຈະ**

***ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດຄ່າເງິນລາວ***